**ຫົວຂໍ້: " ຂໍເຊີນປະກອບຄໍາເຫັນໃສ່ ເອກະສານ ແບບຟອມກອບວຽກຮັບປະກັນການປົກປັກຮັກສາດ້ານສິ່ງແວດລ້ອມທໍາມະຊາດ ແລະ ສັງຄົມ  ທີ່ຈໍາເປັນ ເພື່ອເປັນເອກະສານປະກອບໃສ່ກັບບົດສະເໜີໂຄງການ ທີ່ຈະສົ່ງຫາ ກອງທຶນສີຂຽວ"**

ອົງການສະຫະປະຊາຊາດເພື່ອການພັດທະນາ ຮ່ວມກັບ ກະຊວງກະສິກໍາ ແລະ ປ່າໄມ້, ສູນຄົ້ນຄວ້າກະສິກ□າ ແລະ ປ່າໄມ້ແຫ່ງຊາດ ພັດທະນາບົດສະເໜີໂຄງການຫາ ກອງທຶນສີຂຽວ ຊື່ "ໂຄງການສົ່ງເສີມລະບົບກະສິກໍາຕໍ່ກັບການປັບໂຕເຂົ້າກັບການປ່ຽນແປງດິນຟ້າອາກາດເພື່ອປັບປຸງການຄໍ້າປະກັນສະບຽງອາຫານໃຫ້ແກ່ຊຸມຊົນທີ່ມີຄວາມສ່ຽງທີ່ສຸດໃນ ສປປ ລາວ".

ໂຄງການຖືກອອກແບບໂດຍມີການປຶກສາຫາລືຢ່າງກວ້າງຂວາງກັບພາກສ່ວນກ່ຽວຂ້ອງ ໃນລະດັບ ສູນກາງ, ແຂວງ, ເມືອງ ແລະ ບ້ານ. ການປຶກສາຫາລື ຖືກດໍາເນີນໂດຍມີການພິຈາລະນາບັນຫາກ່ຽວກັບ ບົດບາດຍິງ-ຊາຍ ແລະ ກຸ່ມຄົນຊົນເຜົ່າ.

**ແບບຟອມ "ກອບວຽກການຄັດກອງດ້ານສິ່ງແວດລ້ອມ ແລະ ສັງຄົມ" ແລະ "ກອບວຽກການຄຸ້ມຄອງດ້ານສິ່ງແວດລ້ອມ ແລະ ສັງຄົມ"** ໄດ້ຖືກກະກຽມ ເພື່ອ ຮັບປະກັນການປົກປັກຮັກສາ ດ້ານ ສິ່ງແວດລ້ອມ ແລະ ສັງຄົມ ທີ່ຈໍາເປັນ.

ເອກະສານທັງສອງ ແມ່ນມີທັງ ພາສາລາວ ແລະ ພາສາອັງກິດ ເພື່ອໃຫ້ມະຫາຊົນໄດ້ທົບທວນ. ກະລຸນາກົດເບິ່ງລີ້ງດ້ານລຸ່ມ. ພາກສ່ວນກ່ຽວຂ້ອງຕ່າງໆສາມາດ ທົບທວນ ແລະ ປະກອບຄໍາເຫັນ ໃຫ້ແກ່ເອກະສານດັ່ງກ່າວ ຊຶ່ງເປັນສ່ວນໜຶ່ງຂອງຂະບວນການເຜີຍແຜ່ຂໍ້ມູນໃຫ້ແກ່ສາທາລະນາ ຂອງ ກອງທຶນສີຂຽວ.